# ພຣະຄຳພີ

## ຈົດໝາຍຂອງ ໂຢຮັນ
## ສະບັບທີ່ສອງ

ສະບັບ 2010

# ຈົດໝາຍຂອງ
# ໂຢຮັນ ສະບັບທີສອງ

1ຈາກ ຂ້າພະເຈົ້າຜູ້ເຖົ້າແກ່ຮຽນ ມາຍັງຍິງທີ່ຊົງເລືອກໄວ້ກັບບັນດາລູກຂອງທ່ານ ຊຶ່ງຂ້າ-
ພະເຈົ້າຮັກເນື່ອງດ້ວຍຄວາມຈິງ ບໍ່ແມ່ນແຕ່ຂ້າພະເຈົ້າຜູ້ດຽວ ແຕ່ຄົນທັງປວງທີ່ຮູ້ຈັກຄວາມຈິງກໍ
ຮັກເໝືອນກັນ. 2ຍ້ອນຄວາມຈິງທີ່ຕັ້ງຢູ່ໃນເຮົາທັງຫລາຍ ແລະຊຶ່ງຈະດຳລົງຢູ່ກັບພວກເຮົາ
ສືບໆ ໄປເປັນນິດ. 3ພຣະຄຸນ, ພຣະເມດຕາ, ແລະສັນຕິສຸກທີ່ມາຈາກພຣະເຈົ້າພຣະບິດາ
ແລະຈາກພຣະເຢຊູຄຣິດ ພຣະບຸດຂອງພຣະບິດານັ້ນ ຈະສະຖິດຢູ່ກັບເຮົາທັງຫລາຍໃນຄວາມ
ຈິງແລະໃນຄວາມຮັກ.

## ຕັ້ງຢູ່ໃນຫລັກຄຳສອນຂອງພຣະຄຣິດ

4ຂ້າພະເຈົ້າໄດ້ມີຄວາມຍິນດີຢ່າງຫລວງຫລາຍ ເພາະໄດ້ພົບລູກຂອງທ່ານລາງຄົນດຳເນີນ
ຊີວິດຕາມຄວາມຈິງ ຕາມທີ່ເຮົາທັງຫລາຍໄດ້ຮັບຂໍ້ບັນຍັດຈາກພຣະບິດາ.

5ທ່ານຍິງເອີຍ, ຂ້າພະເຈົ້າຂໍເຊີນທ່ານໃຫ້ເຮົາທັງຫລາຍຮັກເຊິ່ງກັນແລະກັນ ບໍ່ແມ່ນເໝືອນ
ກັບວ່າເຮົາໄດ້ຂຽນຂໍ້ບັນຍັດໃໝ່ມາຍັງທ່ານ ແຕ່ເປັນຂໍ້ບັນຍັດທີ່ພວກເຮົາໄດ້ມີມາແລ້ວຕັ້ງແຕ່
ເດີມ. 6ນີ້ແຫລະ, ເປັນຄວາມຮັກ ຄືໃຫ້ເຮົາທັງຫລາຍປະຕິບັດຕາມບັນດາຂໍ້ບັນຍັດຂອງພຣະ-
ອົງ ນີ້ແຫລະ, ເປັນຂໍ້ບັນຍັດທີ່ທ່ານທັງຫລາຍໄດ້ຍິນໄດ້ຟັງຕັ້ງແຕ່ຕົ້ນເດີມນັ້ນ ເພື່ອພວກທ່ານ
ຈະໄດ້ປະຕິບັດຕາມ. 7ເພາະວ່າມີຜູ້ຫລອກລວງເປັນຈຳນວນຫລາຍໄດ້ອອກໄປໃນໂລກແລ້ວ
ຄົນເຫລົ່ານີ້ບໍ່ຍອມຮັບວ່າພຣະເຢຊູຄຣິດໄດ້ສະເດັດລົງມາຮັບຊາດເປັນມະນຸດ ຄົນນັ້ນແຫລະ,
ເປັນຜູ້ຫລອກລວງແລະເປັນຜູ້ຕໍ່ສູ້ພຣະຄຣິດ. 8ທ່ານທັງຫລາຍຈົ່ງລະວັງຕົວໃຫ້ດີ ເພື່ອພວກ
ທ່ານຈະບໍ່ເສຍຜົນປະໂຫຍດໃນການເຮັດຂອງຕົນ ແຕ່ເພື່ອພວກທ່ານຈະໄດ້ຮັບບຳເໜັດເຕັມ
ສ່ວນ.

9ຜູ້ໃດລ່ວງເກີນແລະບໍ່ດຳລົງຢູ່ໃນພຣະໂອວາດຂອງພຣະຄຣິດຜູ້ນັ້ນກໍບໍ່ມີພຣະເຈົ້າ, ຜູ້ໃດ
ດຳລົງຢູ່ໃນພຣະໂອວາດນີ້ ຜູ້ນັ້ນແຫລະ, ທັງມີພຣະບິດາແລະມີພຣະບຸດ. 10ຖ້າຜູ້ໃດມາຫາ
ພວກທ່ານແລະບໍ່ຖືພຣະໂອວາດນີ້ມານຳຢ່າຮັບຜູ້ນັ້ນໄວ້ໃນເຮືອນແລະຢ່າສະແດງຄວາມຄຳນັບ
ຕໍ່ຜູ້ນັ້ນ. 11ເພາະວ່າຜູ້ທີ່ສະແດງຄວາມຄຳນັບຕໍ່ເຂົາ ກໍເຂົ້າສ່ວນໃນການຊົ່ວຂອງເຂົາ.

## ຄຳສະແດງຄວາມນັບຖືຕອນທ້າຍ

12ຂ້າພະເຈົ້າຍັງມີຂໍ້ຄວາມອີກຫລາຍຂໍ້ທີ່ຈະຂຽນເຖິງທ່ານທັງຫລາຍ ແຕ່ກໍບໍ່ຢາກໃຊ້ເຈັ້ຍ
ແລະນ້ຳໝຶກຂຽນ ແຕ່ຂ້າພະເຈົ້າຫວັງວ່າຈະມາຫາພວກທ່ານແລະສົນທະນາກັນປາກຕໍ່ປາກ
ເພື່ອຄວາມຍິນດີຂອງພວກເຮົາຈະໄດ້ຄົບເຕັມ.

13ບັນດາລູກນ້ອງສາວຂອງທ່ານທີ່ຊົງເລືອກໄວ້ນັ້ນ ກໍຝາກຄວາມຄິດເຖິງມາຍັງທ່ານ.

*       *       *

# ຕົວຫຍໍ້

| ຊື່ພຣະທຳ | ຕົວຫຍໍ້ | ຊື່ພຣະທຳ | ຕົວຫຍໍ້ |
|---|---|---|---|
| ປະຖົມມະການ | ປຖກ | ປັນຍາຈານ | ປຍຈ |
| ອົບພະຍົບ | ອພຍ | ຍອດເພງ | ຍດພ |
| ລະບຽບພວກເລວີ | ລລວ | ເອຊາຢາ | ອຊຢ |
| ຈົດເຊັນບັນຊີ | ຈຊບ | ເຢເຣມີຢາ | ພຄຄ |
| ພຣະບັນຍັດສອງ | ພບຍ | ເພງຄໍ່າຄວນ | ຢຣມ |
| ໂຢຊວຍ | ຢຊຍ | ເອເຊກີເອນ | ອສກ |
| ພວກຜູ້ປົກຄອງ | ຜປຄ | ດານີເອນ | ດນອ |
| ນາງຣຸດ | ນຣດ | ໂຮເຊອາ | ຮຊອ |
| 1 ຊາມູເອນ | 1ຊມອ | ໂຢເອນ | ຢອນ |
| 2 ຊາມູເອນ | 2ຊມອ | ອາໂມດ | ອມດ |
| 1 ກະສັດ | 1ກສດ | ໂອບາດີຢາ | ອບດ |
| 2 ກະສັດ | 2ກສດ | ໂຢນາ | ໂຢນ |
| 1 ຂ່າວຄາວ | 1ຂຄວ | ມີກາ | ມກາ |
| 2 ຂ່າວຄາວ | 2ຂຄວ | ນາຮູມ | ນຮມ |
| ເອັດຊະຣາ | ອສຣ | ຮາບາກຸກ | ຮບກ |
| ເນເຣມີຢາ | ນຣຢ | ເຊຟານີຢາ | ສຟຢ |
| ເອສະເທີ | ອຊທ | ຮັກກາຍ | ຮກຍ |
| ໂຢບ | ໂຢບ | ເສກາລີຢາ | ສກຢ |
| ເພງສັນລະເສີນ | ພສສ | ມາລາກີ | ມລກ |
| ສຸພາສິດ | ສພສ | | |

This 2010 edition of the Lao Bible has been revised and extended from the 1979 edition of the Lao Shorter Old Testament and 1973 edition of the Lao New Testament, as published by Thailand Bible Society in 1991.

Lao Bible Online – http://www.laobible.net.